# ໜັງສືໂຣມ

ໃຈຄວາມສຳຄັນ    ຈະເປັນຜູ້ຊອບທັມໃນອົງພຣະຄຣິດ

ຈຳນວນບົດ    ໑໖ ບົດ

ໜັງສືໂຣມ ຄືຈົດໝາຍທີ່ທ່ານໂປໂລຂຽນໄປຫາພີ່ນ້ອງທີ່ຢູ່ໃນກຸງໂຣມ ພວກພີ່ນ້ອງຫລືຄຣິສຕະຈັກທຸກຍຸກທຸກສໄມໄດ້ຮັບປະໂຍດຈາກໜັງສືນີ້ຢ່າງຫລວງຫລາຍ ໂດຍສະເພາະແລ້ວທ່ານມາຕິນລູທີ Martin Luther ໄດ້ຍຶດຖືຄຳສອນຈາກໜັງສືນີ້ ຈຶ່ງເປັນເຫດໃຫ້ເພິ່ນແຍກຈາກພວກຄຸນພໍ່ (ຄຣິສຕັງ) ແລ້ວມາສອນແລະປະພຶດຕາມທີ່ມີຢູ່ໃນພຣະຄັມພີ ທ່ານມາຕິນລູເທີໄດ້ເວົ້າວ່າ "ພວກຄຣິສຕຽນທຸກຄົນຄວນຈະອ່ານໜັງສືໂຣມໃນທຸກ ໆ ວັນ ແລະໃຫ້ທ່ອງຂຶ້ນໃຈຈຶ່ງໄດ້ທຸກຄວາມ"

## ວ່າດ້ວຍຜູ້ຂຽນ

ທ່ານໂປໂລໄດ້ບອກເອງວ່າ ເພິ່ນເປັນຜູ້ຂຽນໜັງສືນີ້ (໑:໑) ແລະເອີ້ນຕົນເອງວ່າເປັນຂ້າໃຊ້ຂອງພຣະຄຣິດ

ທ່ານໂປໂລເປັນຊາວຢູດາ ແຕ່ກ່ອນເພິ່ນເປັນຄົນທີ່ມັກໃຫຍ່ໃຝ່ສູງແລະຮັກລັດທິປະເພນີຂອງຊາດຕົນທີ່ສຸດ ຕໍ່ມາເພິ່ນໄດ້ເປັນອາຈານຜູ້ປະກາດ ແລະໄດ້ເປັນອັຄສາວົກຂອງພຣະເຢຊູຄຣິດຄົນສຳຄັນຜູ້ນຶ່ງ ເພິ່ນເຄີຍຖືກຄຸກແລະຖືກທໍຣະມານເພາະຂ່າວປະເສີດຫລາຍຄັ້ງຫລາຍຫົນ ທ່ານໂປໂລເປັນຜູ້ເຂົ້າໃຈພຣະຄັມພີຢ່າງດີ ເຊັ່ນເມື່ອຂຽນໜັງສືໂຣມນີ້ໄດ້

ອ້າງພຣະຄັມພີເຖິງ ໕໗ ເທື່ອ ເພິ່ນໄດ້ຂຽນໜັງສືນີ້ເມື່ອເດີນໄປປ່າວປະກາດຄັ້ງທີສາມ ໃນປີ ຄ ສ. ໕໘

## ວ່າດ້ວຍຜູ້ຮັບໜັງສື

ທ່ານໂປໂລໄດ້ ຂຽນໜັງສື ນີ້ ໄປ ຫາພວກ ພີ່ນ້ອງທີ່ຢູ່ ໃນ ກຸງໂຣມ ພວກພີ່ນ້ອງເຫລົ່ານີ້ຄືຄົນຊາດອັນນຶ່ງໃນພວກຕ່າງປະເທດ (໑:໖,໑໓; ໑໑:໑໓,໒໕,໒໘,໓໐; ໑໕:໑໕-໒໑) ແລະຊົນຊາດຢູດາດ້ວຍ (໒:໑໗; ໔:໑; ໗:໑) ສນັ້ນທ່ານໂປໂລຈຶ່ງໄດ້ເຕືອນພວກເຂົາໃຫ້ຮັກແພງແລະ ອົດທົນຕໍ່ກັນ (ບົດ ໑໔,໑໕)

ຜູ້ຕັ້ງຄຣິສຕະຈັກໃນກຸງໂຣມບໍ່ແມ່ນທ່ານໂປໂລ ເພາະວ່າຄຣິສຕະຈັກນີ້ໄດ້ເກີດຂຶ້ນກ່ອນທ່ານໂປໂລໄປຢ້ຽມກຸງໂຣມ (໑:໑໐–໑໒) ແລະ ກໍບໍ່ແມ່ນທ່ານເປໂຕເປັນຜູ້ຈັດຕັ້ງຂຶ້ນ ເພາະທ່ານໂປໂລໄດ້ເວົ້າຕອນນຶ່ງ ວ່າ "ດ້ວຍເຫດນີ້ ຂ້າພຣະເຈົ້າຈຶ່ງຕັ້ງຈຸດໝາຍປາຍທາງໄວ້ວ່າ ຈະໄປ ປ່າວປະກາດຂ່າວປະເສີດໃນທີ່ຊຶ່ງຍັງບໍ່ມີໃຜອອກນາມພຣະຄຣິດ ເພື່ອ ຂ້າພຣະເຈົ້າ ຈະບໍ່ ໄດ້ກໍ່ຂຶ້ນເທິງຮາກຖານ ຂອງ ຄົນອື່ນທີ່ ໄດ້ວາງໄວ້ແລ້ວ" (໑໕:໒໐) ແລະຖ້າທ່ານເປໂຕເປັນຜູ້ຈັດຕັ້ງຂຶ້ນ ທ່ານໂປໂລກໍຄົງຈະໄດ້ ອອກຊື່ເພິ່ນແລ້ວ ແຕ່ພວກເຮົາໄດ້ເຂົ້າໃຈດັ່ງນີ້ ຄືໃນວັນເພັນເຕກອສເຕນັ້ນ ໄດ້ມີພວກຢູດາມາແຕ່ກຸງໂຣມ (ກິຈການ ໒:໑໐) ແລ້ວໄດ້ມີ ໂອກາດຮັບຟັງຂ່າວປະເສີດກັບພວກ ພີ່ນ້ອງທັງຫລາຍ ເມື່ອພວກຢູດາເຫລົ່ານັ້ນກັບຄືນໄປກຸງໂຣມ ກໍໄດ້ເປັນພະຍານຝ່າຍພຣະເຢຊູຄຣິດ ແລະໄດ້

ນິຄົມອື່ນໆ ເຂົ້າມາເຊື່ອເພີ່ມເຕີມຫລາຍຂຶ້ນ ແລ້ວກໍໄດ້ເກີດເປັນໝ່ວຍຄຣິສຕະຈັກ

## ວ່າດ້ວຍຄວາມມຸ່ງໝາຍ

໑. ທ່ານໂປໂລຕ້ອງການຢາກກ່າວໃຫ້ພີ່ນ້ອງຊາບວ່າ ຖ້າມີໂອກາດເພີ່ມ ຢາກ ໄປ ຢ້ຽມ ຢາມພວກ ເຂົາ ພ້ອມ ທັງຢາກເລີຍ ໄປປ່າວປະກາດເຖິງປະເທດສເປັນດ້ວຍ ແລະຢາກເອົາກຸງໂຣມເປັນຈຸດສູນກາງ ບົດ ໑໕:໒໓–໒໔

໒. ພວກພີ່ນ້ອງເຫລົ່ານັ້ນໄດ້ເປັນຄົນເຊື່ອໃໝ່ ສນັ້ນທ່ານໂປໂລຈິ່ງຢາກສົ່ງເສີມຄວາມເຊື່ອຂອງພວກເຂົາໃຫ້ຈະເຣີນຂຶ້ນ ແລະໃຫ້ພວກເຂົາໄດ້ຮັບຊີວິດໃໝ່

໓. ເພື່ອເຕືອນສະຕິພວກພີ່ນ້ອງເຫລົ່ານັ້ນ ໃຫ້ມີຄວາມຮັກແພງແລະອົດທົນຕໍ່ກັນແລະກັນ

໔. ບໍ່ໃຫ້ຊາວຢູດາບັງຄັບຄົນເຊື່ອໃໝ່ໃຫ້ຖືບັນຍັດຂອງສາສນາຢູດາ

## ການແບ່ງເປັນພາກ

ພາກທີ ໑ ຄຳນຳ ບົດ ໑:໑–໑໗

ມະນຸດທຸກຄົນມີບາບ ບົດ ໑:໑໘–໓:໒໐

– ພວກຕ່າງປະເທດມີໂທດ ບົດ ໑:໑໘–໓໒

– ພວກຢູດາມີໂທດ ບົດ ໒.໑–໓:໘

– ບໍ່ມີຄົນຊອບທັມເລີຍ ບົດ ໓:໙–໒໐

ພາກທີ ໒ ຕັ້ງຢູ່ໃນຄວາມຍຸຕິທັມ
ດ້ວຍຄວາມເຊື່ອ ບົດ ໓:໒໑–໕:໒໑

– ພຣະຄຣິດເປັນຮາກຖານແຫ່ງການຕັ້ງຢູ່
ໃນຄວາມຍຸຕິທັມ ບົດ ໓:໒໑–໒໖

– ຄວາມເຊື່ອເປັນຊ່ອງທາງໃຫ້ເກີດ
ຄວາມຍຸຕິທັມ ບົດ ໓:໒໗-໔:໒໕

– ຜົນຂອງພຣະວິນຍານໃຫ້ເກີດຄວາມ
ຍຸຕິທັມ ບົດ ໕:໑–໑໑

– ອາດາມກັບພຣະຄຣິດຫລືບາບກັບ
ພຣະຄຸນ ບົດ ໕:໑໒–໒໑

ພາກທີ ໓ ຕັ້ງຢູ່ໃນຄວາມບໍຣິສຸດ
ດ້ວຍຄວາມເຊື່ອ ບົດ ໖-໘

– ພົດຄວາມປາຖນາທີ່ຈະກະທຳບາບແລະ
ມີຊີວິດດ້ວຍພຣະຄຣິດ ບົດ ໖

– ການຕໍ່ສູ້ກັນຣະຫວ່າງເນື້ອໜັງກັບ
ຈິດໃຈຂອງຄົນທີ່ເຊື່ອ ບົດ ໗

– ມີຊີວິດໃໝ່ແລະໄຊຊນະດ້ວຍພຣະຄຣິດ ບົດ ໘

ພາກທີ ໔ ຄວາມຍຸຕິທັມຂອງພຣະເຈົ້າກ່ຽວກັບ
ການເອີ້ນພວກອິສຣາເອັນ ບົດ ໙–໑໑

– ພຣະອົງຊົງເລືອກພວກອິສຣາເອັນໄວ້ ບົດ ໙:໑–໒໙

ພາກທີ ໔ – ພວກອິສຣາເອັນຖືກປະຖິ້ມ

ບົດ ໙:໓໐–໑໐:໒໑

– ພວກອິສຣາເອັນຫລົບຕັ້ງໃຈໃໝ່ ບົດ ໑໑

ພາກທີ ໕ ການດຳເນີນຊີວິດຕາມ

ຄວາມບຸກິຫັນຂອງພຣະເຈົ້າ ບົດ ໑໒–໑໕

໑. ວ່າດ້ວຍໜ້າທີ່ຂອງຄົນຄຣິສຕຽນ ບົດ ໑໒,໑໓

– ໃນວົງການສາສນາ ບົດ ໑໒:໑–໑໓

– ໃນວົງການສັງຄົມ ບົດ ໑໒:໑໔–໒໑

– ໃນວົງຂ້າຣາຊການ ບົດ ໑໓

໒. ວ່າດ້ວຍກົດຣະບຽບຂອງຄົນຄຣິສຕຽນ

ບົດ ໑໔:໑–໑໕:໑໓

– ຄວາມເຊື່ອຂອງຄົນຄຣິສຕຽນ ບົດ ໑໔:໑–໑໒

– ຄວາມຮັກຂອງຄົນຄຣິສຕຽນ ບົດ ໑໔:໑໓–໒໓

– ຄວາມເປັນເອກພາບຂອງຄົນຄຣິສຕຽນ ບົດ ໑໕:໑–໑໓

ຂໍ້ຄວາມສຸດທ້າຍ

– ຄວາມປະສົງແລະແຜນການຂອງທ່ານ

ໂປໂລ ບົດ ໑໕:໑໔–໓໓

– ການສະແດງຄວາມຄຳນັບແລະເຕືອນໃຫ້ຣະວັງ ບົດ ໑໖